ສຶກສາຄວາມເປັນໄປໄດ້ຂອງການກໍ່ສ້າງທາງດ່ວນ ຊ່ວງທີ III,

ແຕ່ວຽງຈັນ ຫາ ປາກເຊ, ແຂວງຈຳປາສັກ

ກະຊວງໂຍທາທິການ ແລະ ຂົນສົ່ງ (ຍທຂ) ແລະ ບໍລິສັດພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (PCD) ຮ່ວມກັບກຸ່ມ ບໍລິສັດລັດວິສາຫະກິດ ວິສະວະກຳ ກໍ່ສ້າງ ສປ ຈີນ (CSCEC) ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ ກ່ຽວກັບການສຶກສາ ຄວາມເປັນໄປໄດ້ຂອງໂຄງການກໍ່ສ້າງທາງດ່ວນ ແລວທາງໃໝ່, ແຕ່ນະຄອນຫຼວງວຽງຈັນ ຫາ ປາກເຊ, ແຂວງຈຳປາສັກ, ຊ່ວງທີ III ແຕ່ແຍກທາງເລກ 9 (ເຊໂນ), ແຂວງ ສະຫວັນນະເຂດ ຫາ ແຍກທາງເລກ 15 (ນາປົ່ງ), ແຂວງສາລະວັນ, ການ ກຳນົດໄວ້ຊ້ວງທຳອິດຂອງໄລຍະທາງແມ່ນ 128 ກິໂລແມັດ.

ພິທີເຊັນບົດບັນທຶກດັ່ງກ່າວໄດ້ຈັດຂຶ້ນໃນວັນສຸກ ທີ 26/10/2018 ທີ່ຫ້ອງປະຊຸມ ກະຊວງໂຍທາທິການ ແລະ ຂົນສົ່ງ ໃຫ້ ກຽດເປັນປະທານໂດຍ ທ່ານ ແພງ ດວງເງິນ, ຫົວໜ້າກົມຂົນສົ່ງ, ກະຊວງ ຍທຂ ໃນນາມເປັນເຈົ້າຂອງໂຄງການ ພ້ອມດ້ວຍ ຜູ້ລົງທຶນ ນຳໂດຍ ທ່ານ ສີທາ ພົມມະຈິດ, ອຳນວຍການ ບໍລິສັດພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ຮ່ວມທຶນ ກັບກຸ່ມ ບໍລິສັດລັດວິສາຫະກິດ ວິສະວະກຳກໍ່ສ້າງ ສປ ຈີນ, ໃນນາມເປັນປະທານໂດຍ ທ່ານ Meng Chao; ຄຽງຄູ່ກັນນັ້ນໃຫ້ກຽດ ເປັນພະຍານເຂົ້າຮ່ວມພິທີດັ່ງກ່າວ ໂດຍ ທ່ານ ປອ. ບຸນຈັນ ສີນທະວົງ, ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ, ທ່ານເລຂາເສດຖະກິດຂອງສະຖານທູດຈີນ ປະຈຳ ສປປ ລາວ, ຄະນະກົມຈາກກະຊວງອ້ອມຂ້າງທີ່ກ່ຽວຂ້ອງ ພ້ອມດ້ວຍ ພະນັກງານ, ຕ່າງໜ້າອົງການລັດວິສະຫະກິດ, ທະນາຄານ ແລະ ວິຊາການຈາກທັງສອງບໍລິສັດ ກໍ່ເຂົ້າຮ່ວມເຊັ່ນດຽວກັນ ເພື່ອເປັນສັກຂີພິຍານໃນພິທີການຄັ້ງນີ້.

ຜົນປະໂຫຍດຂອງການກໍ່ສ້າງທາງດ່ວນ ແຕ່ນະຄອນຫຼວງວຽງຈັນ ຫາ ປາກເຊ ແມ່ນສອດຄ່ອງກັບແຜນພັດທະນາ ເສດຖະກິດສັງຄົມຂອງລັດຖະບານ ສປປ ລາວ ແລະ ແທດເໝາະກັບນະໂຍບາຍຂອງລັດຖະບານ ສປ ຈີນ "ໜຶ່ງແລວທາງ ໜຶ່ງເສັ້ນທາງ", ຜົນປະໂຫຍດທີສອງ ແມ່ນສາມາດຫຼຸດເວລາການເດີນທາງໄປທາງໄກໄດ້ (ປາຍທາງປາກເຊ) ຈາກແລ່ນລົດ ໄປທາງເລກທີ 13 ໃຕ້ ໂດຍທົ່ວໄປໃຊ້ເວລາປະມານ 8-10 ຊົ່ວໂມງ ຖ້ານຳໃຊ້ທາງດ່ວນໃນອະນາຄົດ ຕາມການຄາດຄະເນ ອາດຈະຫຼຸດລົງ ເປັນ 6-7 ຊົ່ວໂມງເທົ່ານັ້ນ ຊຶ່ງເປັນການເພີ່ມປະສິດທິຜົນໃນການເດີນທາງ ກໍຄືການດຳເນີນທຸລະກິດ ແລະ ອີກຢ່າງໜຶ່ງ ທາງດ່ວນດັ່ງກ່າວເປັນໂສມໜ້າອັນໃໝ່ໃຫ້ແກ່ປະເທດລາວ ຈາກເປັນປະເທດບໍ່ມີທາງອອກສູ່ທະເລ ກາຍ ເປັນເປະເທດເຊື່ອມໂຍງກັບພາກພື້ນ ປະກອບການເຊື່ອມຈອດກັບບັນດາປະເທດໃກ້ຄຽງ, ໂຄງການທາງລົດໄຟເຊື່ອມໂຍງ ລາວ-ຈີນ ແລະ ອື່ນໆ.

ຫຼັງຈາກ ສຳເລັດເຊັນບົດບັນທຶກຄວາມເຂົ້າໃຈສະບັບນີ້ແລ້ວ, ທັງສອງບໍລິສັດ ຄື: PCD ຮ່ວມກັບ CSCEC ກໍຄືຜູ້ລົງທຶນ ແມ່ນຈະໃຊ້ໄລຍະເວລາທັງໝົດ 16 ເດືອນ ໃນການດຳເນີນສຳຫຼວດການສຶກສາຄວາມເປັນໄປໄດ້ດັ່ງກ່າວ, ຊຶ່ງຄາດຫວັງວ່າ ຈະສຳເລັດການສຶກສາຄວາມເປັນໄປ ໃນຕົ້ນປີ 2020 ແລະ ຄາດໝາຍວ່າຈະໄດ້ຮັບການເຊັນສັນຍາສຳປະທານ ການກໍ່ສ້າງ ທາງດ່ວນ ໃນຮູບແບບກໍ່ສ້າງ-ດຳເນີນການ/ບໍລິການສິ່ງກໍ່ສ້າງ-ມອບໂອນໃຫ້ລັດຖະບານ (BOT) ຊຶ່ງໄດ້ກຳນົດໄວ້ໃບບົດ ບັນທຶກຄວາມເຂົ້າໃຈສະບັບນີ້.


ລະຫວ່າງ
ກົມຂົວທາງ, ກະຊວງໂຍທາທິການ ແລະ ຂົນສົ່ງ
ແລະ
ແລະ ພັດທະນາ ມະຫາຊົນຮ່ວມກັບ ກຸ່ມບໍລິສັດລັດວິສາຫະກິດ ວິສະວະກໍາກໍ່ສ້າງ ສປ ຈີນ


สาธาละมะลัด ปะชาทิปะไต ปะชาชิมลาว
สันติพาบ เอกะลาด ปะชาทิปะไต เอกะพาบ อัดทะมะถาวอม
พักปะชาชิมปะติวัดลาวทิ่มิกงดสะหง่าหามั้นยืน
Signing Ceremony of Memorandum of Understanding
(MOU)